ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ລົງຢ້ຽມຢາມໂຄງການ ພັດທະນາເຂດເສດຖະກິດ-ອຸດສາຫະກຳ ທ່ອງທ່ຽວ ວັດທະນະທຳ ເມືອງວັງວຽງ ແຂວງວຽງຈັນ

ໃນວັນທີ 9 ກັນຍາ 2026 ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ໄດ້ລົງຢ້ຽມຢາມພາກສະໜາມຂອງໂຄງການ ພັດທະນາເຂດເສດຖະກິດ-ອຸດສາຫະກຳທ່ອງທ່ຽວ ວັດທະນະທຳ ເມືອງວັງວຽງ ແຂວງວຽງຈັນໂດຍເປັນກຽດເຂົ້າຮ່ວມຂອງ**ທ່ານ ນາງ ທະວີຈັນ ທ່ຽງເທບວົງສາ** ຮອງຫົວໜ້າຫ້ອງການ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພ້ອມດ້ວຍຄະນະ ແລະ ພາກສ່ວນທີ່ກ່ຽວຂ້ອງເຊັ່ນ:

-ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ.

-ກະຊວງກະສິກຳ ແລະ ສິ່ງແວດລ້ອມ.

-ກະຊວງອຸດສາຫະກຳ ແລະ ການຄ້າ.


-ກະຊວງໂຍທາທິການ ແລະ ຂົນສົ່ງ.

-ຫ້ອງການຄະນະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ແຂວງວຽງຈັນ.

ໃນການລົງຢ້ຽມຢາມຄັ້ງນີ້ແມ່ນການລົງສຳຫຼວດ ພາກສະໜາມ ແລະ ແລກປ່ຽນຄວາມເຫັນຂອງແຕ່ລະພາກສ່ວນ ເພື່ອເຮັດໃຫ້ໂຄງການດັ່ງກ່າວປັບລຸຕາມແຜນປັບປຸງ ແລະ ຟື້ນຟູທຸລະກິດ ແລະ ເພື່ອກຽມເຊັນສັນຍາສຳປະທານໂຄງການພັດ ທະນາເສດຖະກິດ-ອຸດສາຫະກຳທ່ອງທ່ຽວ ວັດທະນະທຳ ເມືອງວັງວຽງ ແຂວງວຽງຈັນ ກັບລັດຖະບານໄລຍະໃກ້ນີ້.














ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
老挝文化旅游集团股份有限公司
LAO CULTURE TOURISM Public Group Company